**News related to land and natural resources from 18-22 December 2017.**
**Summarized by LIWG Secretariat**
**……………………………...........**

ສະຫຼຸບຂ່າວປະຈຳອາທິດລະຫວ່າງ ກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ລະຫວ່າງວັນທີ 18-22 ທັນວາ 2017.

ສະຫຼຸບຂ່າວໂດຍ ກອງເລຂາ LIWG

## English news

**Land management deficiencies addressed as ministry meets: By Vientiane Times**
The meeting report defined 10 main factors leading to poor land management.
Land allocation in Vientiane, at provincial, district and village levels, faced difficulties because the authorities had no regulations as a reference, as the National Master Plan on Land Allocation was yet to be approved.
The repeated implementation of the laws and other regulations on land between some sectors particularly between the Ministry of Natural Resources and Environment and the Ministry of Finance caused complications in land management.
The inadequacies of the Land Law have been evident in disputes regarding compensation for land acquisition relating to several development projects such as the Laos-China railway, Vientiane-Luang Prabang Expressway, and the 450 Year Road.
**Corruption causing major loss to the nation: Vientiane Times**
The state lost more than 480 billion kip through corruption over the past five years, and this directly affected national development and poverty reduction efforts in Laos, the State Inspection Authority (SIA) has said.
During a recent address on the occasion of the International Anti-Corruption Day recently, the SIA Vice Chairman, Mr Sinay Mienglavanh, announced that his organisation will enhance its efforts to scrutinise target sectors and ensure corruption-free projects.
This includes sectors related to revenue amassment and budget expenditure, infrastructure development projects, land use management, excavation of natural resources and prosecution of state services.
The SIA will also concentrate on examining state enterprises and unauthorised development projects in which the value of the construction is overly expensive.
**CK chases one-fifth of project action : By Bangkok Post**
CK also has a presence in Laos and Myanmar. In Laos, CK Power Co, a subsidiary in which CK holds 28%, is building the Xayaburi Hydroelectric Power Project on the Lower Mekong River. The project is 82.5% complete. The 1,285-megawatt power plant project, in which CK Power holds a 30% stake, will start generating revenue by 2019, with 15 billion baht a year expected once the plant is operating at full capacity.
**Laos fosters cooperation with China, Mekong countries: By Vientiane Times**
Laos is strengthening cooperation with China and the Mekong countries by supporting the five-year strategic plan from 2018-2023 which was approved at last week’s 3rd Lancang-Mekong Cooperation (LMC) Foreign Ministers’ meeting.
Mr Saleumxay said the 3rd LMC meeting reviewed the fruitful results of cooperation over the past three years and approved the five year strategic plan for 2018-2023.

The meeting also agreed to synergise Lancang-Mekong Cooperation through the development strategies of each member country, the Belt and Road Initiative, and the relevant development programmes of Asean.

**Police officer implicated in seizure of illegally felled timber: By Vientiane Times**

Eleven lengths of rosewood timber were found loaded on a Toyota Fortuner driven by a police officer in Attapeu province, a provincial source has said.

The case has put Attapeu in the spotlight again after many incidents of illegal logging and trading were reported in the southern province amid the government's crackdown on the issue.

It was reported last week that provincial authorities had uncovered 180 cubic metres of illegally harvested logs that were buried underground.

## ຂ່າວພາສາລາວ

**ການຄຸ້ມຄອງທີ່ດິນໃນລາວຍັງບໍ່ລວມສູນ ມີການຈັບຈອງແບບຊະຊາຍ: ຂ່າວໂດຍ ລາວພັດທະນາ**

ທ່ານສີມມາດ ພົນເສນາ ມີຄຳເຫັນວ່າ: ປັດຈຸບັນ ການຄຸ້ມຄອງ-ບໍລິຫານທີ່ດິນຍັງບໍ່ທັນໄປຕາມທິດທັນສະໄໝ ແລະ ບໍ່ລວມສູນ, ມີລັກສະນະຟູມເຟືອຍ, ມີການຈັບຈອງທີ່ດິນ-ປ່າສາທາລະນະແບບຊະຊາຍ, ມີການແບ່ງປັນດິນຂອງລັດໃຫ້ບຸກຄົນຖືກຳມະສິດຄອບຄອງແບບບໍ່ຖືກຕ້ອງຕາມລະບຽບກົດໝາຍຢ່າງແຜ່ຫຼາຍ ໂດຍສະເພາະໃນເຂດຕົວເມືອງ, ຊານເມືອງ ແລະ ດິນຢູ່ໃນເຂດທີ່ມີການພັດທະນາພື້ນຖານໂຄງລ່າງໃໝ່, ນອກນັ້ນ ຍັງມີການຮົ່ວໄຫລດ້ານລາຍຮັບທີ່ດິນຢ່າງຫຼວງຫຼາຍ ແລະ ຂໍ້ຂັດແຍ່ງກ່ຽວກັບທີ່ດິນນັບມື້ຫຼາຍຂຶ້ນ. ສະນັ້ນ ການຄຸ້ມຄອງແລະພັດທະນາທີ່ດິນໃນຕໍ່ໜ້ານີ້, ຕ້ອງໄດ້ຈັດສັນຄືນໃໝ່ເພື່ອແຍກເປັນແຕ່ລະປະເພດ, ເພື່ອເຮັດໃຫ້ການຄຸ້ມຄອງທີ່ດິນມີປະສິດທິພາບ, ພ້ອມທັງຮັບປະກັນບໍ່ໃຫ້ຄຸນນະພາບຂອງດິນເກີດການເສື່ອມໂຊມ.

**ລັດຖະບານ ກຳລັງພົບບັນຫາໜີ້ສິນເພີ່ມຂຶ້ນ: ຂ່າວໂດຍ ເລົ່າສູ່ກັນຟັງ**

ນັກເສດຖະສາດໃນຫຼາຍສຳນັກ ລວມທັງໃນພາກລັດ ແລະ ເອກະຊົນ ໃຫ້ສຽງສ່ວນໃຫຍ່ວ່າ: ເຖິງ ແມ່ນວ່າລັດຖະບານລາວຈະພົບກັບບັນຫາໜີ້ສິນຖຸມເຄືອ ຈາກການກູ້ຢືມມາລົງທຶນໃສ່ສາທາລະນຸປະໂພກ ປະມານ 50%-60% ຂອງລາຍໄດ້ເສດຖະກິດແຫ່ງຊາດ, ຈຳນວນໜີ້ສິນທີ່ກູ້ຢືມມາສ່ວນໃຫຍ່ແມ່ນມາຈາກທະນາຄານໂລກ, ADB, IFC ທີ່ເປັນດອກເບ້ຍຕ່ຳໄລຍະຍາວ ເພື່ອນຳມາສຸມໃສ່ກໍ່ສ້າງພື້ນຖານໂຄງລ່າງ, ການສຶກສາ, ສາທາລະນະສຸກ ເປັນຕົ້ນ ດ້ວຍການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ ຕາມແຜນຍຸດທະສາດໄລຍະສັ້ນ, ກາງ ແລະ ໄລຍະຍາວທີ່ວາງໄວ້.

ອ່ານຂ່າວປະເດັນດັ່ງກ່າວເພີ່ມເຕີມໄດ້**ທີ່ນີ້.**

**ເລີ່ມກໍ່ສ້າງທາງລົດໄຟລາວ-ຈີນ ຊ່ວງທີ 4 ທີ່ຫຼວງພະບາງ: ຂ່າວໂດຍ ເສດຖະກິດ-ສັງຄົມ**

ປະຈຸບັນໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ພາຍຫຼັງທີ່ໄດ້ລົງມືກໍ່ສ້າງໃນໄລຍະຜ່ານມາແມ່ນຄວາມຄືບໜ້າຫຼາຍດ້ານ ເປັນຕົ້ນການເຈາະອຸມົງໃນແລວທາງລົດໄຟຂອງຊ່ວງຕ່າງໆ ແລະ ການໄກ່ເກຍປະຊາຊົນທີ່ຖືກໂຄງການ ຂະນະນີ້ຊ່ວງທີ 4 ແມ່ນກຳລັງລົງມືເຈາະອຸມົງເຂດບ້ານດອນໂມ ເມືອງ ຊຽງເງິນ ແຂວງຫຼວງພະບາງ.

**ໄຊຍະບູລີ ມີເນື້ອທີ່ປູກຢາງພາລາ 8 ພັນກວ່າເຮັກຕາ: ຂ່າວໂດຍ ເສດຖະກິດ-ສັງຄົມ**

ກອງປະຊຸມສະຫຼຸບຖອດຖອນບົດຮຽນການປູກຢາງພາລາທົ່ວແຂວງໄຊຍະບູລີໄດ້ຈັດຂຶ້ນໃນຕອນເຊົ້າ ຂອງວັນທີ19 ທັນວາ 2017 ນີ້.

ໃນກອງປະຊຸມໄດ້ລາຍງານວ່າ ໃນປີ 2017 ເນື້ອທີ່ຢູ່ຫຼາຍທ້ອງຖິ່ນສາມາດປາດຢາງພາລາໄດ້ໃນທົ່ວແຂວງລວມມີ 8,700 ກວ່າເຮັກຕາ, ຜົນຜະລິດ 5,300 ກວ່າໂຕນຊຶ່ງປະກອບມີ 9 ເມືອງໃນແຂວງໄຊຍະບູລີ.

ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ປະກອບຄໍາຄິດເຫັນ ສະເໜີໃຫ້ມີການປັບປຸງວຽກງານຢາງພາລາໃນຕໍ່ໜ້າເຖິງແມ່ນວ່າ ຂະບວນການຜະລິດຢາງພາລາຢູ່ພາຍໃນແຂວງໄດ້ຮັບຄວາມສົນໃຈຈາກຊາວກະສິກອນ, ນັກລົງທຶນພາຍໃນ ແລະ ຕ່າງປະເທດຊຶ່ງເຮັດໃຫ້ມີການຂະຫຍາຍຕົວຢ່າງໄວວາກໍ່ຕາມ ແຕ່ຂະບວນການດັ່ງກ່າວຈໍາເປັນຕ້ອງໄດ້ເອົາໃຈໃສ່ໃນການພັດທະນາແຕ່ລະດ້ານຢ່າງເປັນຕ່ອງໂສ້ ແລະ ເປັນລະບົບເຊັ່ນ: ດ້ານການຄຸ້ມຄອງຜະລິດຢາງ, ການລົງທຶນປູກຕົ້ນຢາງ, ການຕະຫຼາດ, ການນໍາໃຊ້ແຮງງານເຂົ້າໃນການຜະລິດຢາງ, ດ້ານສຸຂະພາບຂອງແຮງງານ ທີ່ເຮັດວຽກຢູ່ສວນຢາງ, ການສະໜອງສິນເຊື່ອ ແລະ ດ້ານສິ່ງແວດລ້ອມທີ່ຕິດພັນກັບການຜະລິດຢາງຢູ່ແຕ່ລະທ້ອງຖິ່ນໃນຂອບເຂດທົ່ວແຂວງ.

**ໂຄງການໄຟຟ້າເຊປຽນ9ເຊນໍ້ານ້ອຍຄືບໜ້າແລ້ວ 90%: ຂ່າວໂດຍ ໜັງສືພິມລາວພັດທະນາ**

ເມື່ອອາທິດທີ່ຜ່ານມານີ້ ບໍລິສັດ ຣາຊ-ລາວ ບໍລິການ ຈໍາກັດ ໄດ້ເຊື້ອເຊີນເອົາສື່ມວນຊົນ ຈາກຫຼາຍສໍານັກ ເຂົ້າຢ້ຽມຢາມໂຄງການຮງໄຟຟ້າເຊປຽນ-ເຊນໍ້ານ້ອຍ, ທີ່ແຂວງຈໍາປາສັກ ແລະ ອັດຕະປື, ຊຶ່ງເປັນໂຄງການຮ່ວມທຶນລະຫວ່າງບໍລິສັດ SK&EC ຖືຮຸ້ນ 26%, KOWEPO 25% ແລະ LHSE 24%, ມີກາລັງຕິດຕັ້ງ 410 ເມກາວັດ (MW) ແບ່ງປັນ EGAT: 370 MW ແລະ EDL 40 MW, ແລະ ໄດ້ຮັບສັນຍາສໍາປະທານຈາກລັດຖະບານລາວເປັນເວລາ 27 ປີ ດ້ວຍມູນຄ່າລົງທຶນທັງໝົດ 1,020 ລ້ານໂດລາສະຫະລັດ ແລະ ກໍານົດຂາຍໄຟຟ້າໃນເດືອນກຸມພາ 2019.